**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 589 /ປທສ
ນະຄອນຫຼວງວຽງຈັນ, ວັນທີ 27 ມີນາ 2018

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະການປັບໃໝຕໍ່ຜູ້ລະເມີດການດຳເນີນທຸລະກິດບໍລິການໄປສະນີ

- ອີງຕາມ ກົດໝາຍວ່າດ້ວຍ ການໄປສະນີ(ສະບັບປັບປຸງ), ມາດຕາ 60, ສະບັບເລກທີ 45/ສພຊ, ລົງວັນທີ 25 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການໄປສະນີ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ແນໃສ່ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ ທາງດ້ານເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2. ມາດຕະການປັບໃໝຕໍ່ຜູ້ລະເມີດການດຳເນີນທຸລະກິດບໍລິການໄປສະນີ**

ມາດຕະການປັບໃໝຕໍ່ຜູ້ລະເມີດການດຳເນີນທຸລະກິດບໍລິການໄປສະນີ ແມ່ນການວາງລະບຽບການ ແລະ ອັດຕາຄ່າປັບໃໝຕໍ່ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການໄປສະນີ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສະແຕມໄປສະນີ** ໝາຍເຖິງບັດ, ກາໝາຍ ຫຼື ເຄື່ອງໝາຍ ຊຶ່ງມີມູນຄ່າເປັນເງິນສຳລັບຕິດໃສ່ໄປສະນີພັນ ແລະ ພັດສະດຸໄປສະນີ ເພື່ອເປັນຄ່າບໍລິການໄປສະນີ ແລະ ເພື່ອການສະສົມ;

2. **ບາໂຄດໄປສະນີ** ໝາຍເຖິງ ລະຫັດຂອງເຄື່ອງຝາກທາງໄປສະນີ ເປັນເຄື່ອງໝາຍແທນຂໍ້ມູນທີ່ເຄື່ອງຈັກສາມາດອ່ານໄດ້ດ້ວຍແສງ;

3. **ບຸກຄະລິກກະພາບ** ໝາຍເຖິງ ການກະທຳຂອງບຸກຄົນທີ່ໄດ້ກະທຳຜິດ ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ;

4. **ຄ່າບໍລິການ** ໝາຍເຖິງ ລາຄາໃນການຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງໄປສະນີລວມທັງການສົ່ງເສີມການຂາຍ ຊຶ່ງຜູ້ດຳເນີນທຸລະກິດບໍລິການໄປສະນີປະກາດໃຊ້ໃນແຕ່ລະໄລຍະ;

5. **ຜູ້ດຳເນີນທຸລະກິດບໍລິການໄປສະນີ** ໝາຍເຖິງ ຜູ້ໃຫ້ບໍລິການຮັບຝາກ, ຈັດສົ່ງ ແລະ ແຈກຢາຍເຄື່ອງຝາກທາງໄປສະນີ, ຈັດພິມ ແລະ ຈຳໜ່າຍສະແຕມໄປສະນີ, ຕູ້ໄປສະນີ, ຫີບປ່ອນຈົດໝາຍ, ຂາຍຜະລິດຕະພັນໄປສະນີ, ຮັບ ແລະ ສົ່ງຂໍ້ມູນຂ່າວສານທາງເອເລັກໂຕຣນິກ ແລະ ການເງິນທາງໄປສະນີ.

**ມາດຕາ 4. ຫຼັກການໃນການກຳນົດອັດຕາຄ່າປັບໃໝ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ວາງມາດຕະການ ແລະ ອັດຕາຄ່າປັບໃໝຕໍ່ຜູ້ລະເມີດການດຳເນີນທຸລະກິດບໍລິການໄປສະນີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7, 8, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້. ການວາງມາດຕະການປັບໃໝດັ່ງກ່າວ ແມ່ນອີງຕາມພຶດຕິກຳທີ່ເປັນການລະເມີດ, ລັກສະນະ, ລະດັບຂອງການກະທຳຜິດ ແລະ ບຸກຄະລິກກະພາບຂອງຜູ້ກະທຳຜິດ.

ຜູ້ດຳເນີນທຸລະກິດບໍລິການໄປສະນີທີ່ລະເມີດກົດໝາຍ ແລະ ລະບຽບການໄປສະນີ ນອກຈາກຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ແລ້ວ ຍັງຕ້ອງຮັບຜິດຊອບ ຕໍ່ມາດຕະການທາງແພ່ງ ແລະ ທາງອາຍາຕື່ມອີກ.

**ມາດຕາ 5. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ດຳເນີນທຸລະກິດບໍລິການໄປສະນີ ຢູ່ ສປປ ລາວ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການໄປສະນີ.

## ໝວດທີ 2
## ພຶດຕິກຳທີ່ເປັນການລະເມີດ ແລະ ມາດຕະການປັບໃໝ

**ມາດຕາ 6. ພຶດຕິກຳທີ່ເປັນການລະເມີດ**

ພຶດຕິກຳທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການໄປສະນີ ມີດັ່ງນີ້:

1. ດຳເນີນທຸລະກິດໄປສະນີໂດຍບໍ່ໄດ້ຮັບອະນຸຍາດ;
2. ໃຫ້ບໍລິການເກີນຂອບເຂດທີ່ຕົນໄດ້ຮັບອະນຸຍາດ;

3. ເອົາໃບອະນຸຍາດດຳເນີນທຸລະກິດໄປສະນີ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ;
4. ລັກລອບຝາກສິ່ງຂອງທີ່ຜິດຕໍ່ລະບຽບການໄປສະນີ, ລັກລອບຝາກວັດຖຸມີຄ່າໃສ່ໃນເຄື່ອງຝາກໄປສະນີ;
5. ກໍລະນີອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 7. ດຳເນີນທຸລະກິດໄປສະນີໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດບໍລິການໄປສະນີ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 5,000,000 ກີບ ຫາ 10,000,000 ກີບ ຕໍ່ຄັ້ງ;

**ມາດຕາ 8. ໃຫ້ບໍລິການເກີນຂອບເຂດທີ່ຕົນໄດ້ຮັບອະນຸຍາດ**

ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ໃຫ້ບໍລິການນອກຈາກປະເພດ ແລະ ຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 3,000,000 ກີບ ຫາ 8,000,000 ກີບ ຕໍ່ຄັ້ງ.

**ມາດຕາ 9. ເອົາໃບອະນຸຍາດດຳເນີນທຸລະກິດໄປສະນີ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ**

ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ເອົາໃບອະນຸຍາດດຳເນີນທຸລະກິດ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 2,000,000 ກີບ ຫາ 6,000,000 ກີບ ຕໍ່ຄັ້ງ.

**ມາດຕາ 10. ລັກລອບຝາກສິ່ງຂອງທີ່ຜິດຕໍ່ລະບຽບການໄປສະນີ,ລັກລອບຝາກວັດຖຸມີຄ່າໃສ່ໃນເຄື່ອງຝາກທາງໄປສະນີ**

ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ລັກລອບຝາກສິ່ງຂອງທີ່ຜິດຕໍ່ລະບຽບການໄປສະນີ ແລະ ສິ່ງຂອງທີ່ຜິດຕໍ່ລະບຽບກົດໝາຍ ຈະຖືກປັບໃໝ ແຕ່ 1,000,000 ກີບ ຫາ 10,000,000 ກີບຕໍ່ຄັ້ງ.

**ມາດຕາ 11. ກໍລະນີອື່ນທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ**

ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ໄດ້ລະເມີດກໍລະນີອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການໄປສະນີ ຈະຖືກປັບໃໝ ດັ່ງນີ້:

1. ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຊ້າກ່ອນກຳນົດ ຈະຖືກປັບໃໝ ແຕ່ 500,000 ກີບ ຫາ 2,000,000 ກີບ ຕໍ່ຄັ້ງ;

2. ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ໄດ້ມີການເພີ່ມ ຫຼື ຫຼຸດ ຄ່າບໍລິການໄປສະນີ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 1,000,000 ກີບ ຫາ 5,000,000 ກີບ ຕໍ່ຄັ້ງ;

3. ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ໄດ້ຈັດພິມ ຫຼື ນຳໃຊ້ສະແຕມໄປສະນີ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 5,000,0000 ກີບ ຫາ 10,000,000 ກີບ ຕໍ່ຄັ້ງ;

4. ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ໄດ້ຈັດພິມ ຫຼື ນຳໃຊ້ບາໂຄດໄປສະນີ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 1,000,000 ກີບ ຫາ 5,000,000 ກີບ ຕໍ່ຄັ້ງ;

5. ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ລາຍງານການເຄື່ອນໄຫວດຳເນີນທຸລະກິດຂອງຕົນ ບໍ່ຖືກຕ້ອງ ຕາມຄວາມເປັນຈິງ ຈະຖືກປັບໃໝ ແຕ່ 1,000,000 ກີບ ຫາ 5,000,000 ກີບ ຕໍ່ຄັ້ງ;

6. ຜູ້ດຳເນີນທຸລະກິດບໍລິການໄປສະນີ ທີ່ບໍ່ລາຍງານການເຄື່ອນໄຫວດຳເນີນທຸລະກິດຂອງຕົນ ຈະຖືກປັບໃໝ ແຕ່ 1,000,000 ກີບ ຫາ 3,000,000 ກີບ ຕໍ່ຄັ້ງ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 12. ການຈັດຕັ້ງປະຕິບັດ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມອບໃຫ້ກົມໄປສະນີ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງ ແລະ ລະບຽບການໃດທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດຕໍ່ຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

**ປອ. ທັນສະໄໝ ກົມມະສິດ**